**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 7 ມົກຣາ 2007 ( 1-7-2007 )**

# ເປັນດ້ວຍເຫດໃດຂ້າພະເຈົ້າຈຶ່ງຢູ່ທີ່ນີ້?

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 1:1-4, 26-31

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າໄດ້ຊົງສ້າງມະນຸດຕາມຮູບຮ່າງຂອງພຣະອົງ ແລະມອບໃຫ້ພວກເຮົາເບິ່ງແຍງສິ່ງທີ່ພຣະອົງຊົງສ້າງຂຶ້ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານ ໃຫ້ມີຊີວິດຢູ່ຕາມຫລັກຄຳສອນຂອງພຣະຄັມພີ.

- ໄດ້ບອກເຖິງລັກສະນະພິເສດ ແລະການຮັບຜິດຊອບໃນໂລກຂອງມະນຸດ.
- ໃຫ້ເອົາໃຈໃສ່ຕໍ່ຈຸດປະສົງຂອງພຣະເຈົ້າເພື່ອໃຫ້ສຳເຣັດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## ບົດນຳ:

1. ແນະນຳບົດຮຽນສຳລັບມື້ນີ້ ແລະຫົວເຣື່ອງປະຈຳອາທິດມີຄວາມສອດຄ່ອງກັບຫົວເຣື່ອງປະຈຳເດືອນຢ່າງໃດ
2. **ຄຳຖາມ:** 1) ທ່ານສາມາດອະທິບາຍເຣື່ອງຈັກວານແນວໃດ, ເປັນຫຍັງຄົນທັງຫລາຍຈຶ່ງເກີດມີຂຶ້ນໃນໂລກນີ້?
   **2)** ທ່ານຈະອະທິບາຍເປົ້າຫມາຍຂອງຊີວິດແລະຄຸນຄ່າຂອງຊີວິດແນວໃດ?

## 1. ພຣະເຈົ້າຂອງເຮົາໄດ້ເປັນຜູ້ເລີ້ມຕົ້ນ: ( ປະຖົມມະການ 1:1-4)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ 1:1-4

2) **ອະທິບາຍ:** ຖ້ອຍຄຳທີ່ວ່າ "ເມື່ອຕົ້ນເດີມ" (ເມື່ອເລີ້ມຕົ້ນ) ນັ້ນຫມາຍເຖິງ ຕົ້ນກຳເນີດ Origin ຂອງຈັກວານ. ແຕ່ຢ່າງໃດກໍຕາມ ແມ່ນພຣະເຈົ້າພຽງອົງດຽວທີ່ຊົງພຣະຊົນຢູ່ຕລອດໄປເປັນນິດ, ພຣະອົງບໍ່ມີການເລີ້ມຕົ້ນແລະບໍ່ມີ

ການສິ້ນສຸດ (ຊົງເປັນເບື້ອງຕົ້ນແລະເບື້ອງປາຍ (ພຣະນິມິດ 22:13 )ພຣະອົງຊົງເປັນຢູ່ກ່ອນພວກເຮົາ ພຣະອົງໄດ້ຊົງນິຣະມິດສ້າງສັພທຸກສິ່ງ, ເປັນຈຸດສູນກາງຂອງສິ່ງທັງປວງ. **ຄໍາຖາມ:** (1) ໃນຖ້ອຍຄໍາທີ່ວ່າ "*ເມື່ອຕົ້ນເດີມພຣະເຈົ້າ...*" ໄດ້ແຍກຄຣິສຕຽນອອກຈາກສາສນາອື່ນ ໆຢ່າງໃດ? (**2**) ຈຸດເລີ້ມຕົ້ນຂອງທ່ານກັບພຣະເຈົ້າແມ່ນຫຍັງ? (ການໄດ້ຮັບຄວາມລອດພົ້ນ )

3) ນໍາພານັກຮຽນໃຫ້ແລກປ່ຽນຄວາມຄິດເຫັນກັນເຖິງຄວາມຄ້າຍຄືແລະຄວາມແຕກຕ່າງຣະຫວ່າງພຣະທັມປະຖົມການ 1:1 ແລະ ພຣະທັມໂຢຮັນ 1:1

4) ເປັນດ້ວຍເຫດໃດສິ່ງທີ່ພຣະເຈົ້າໄດ້ຊົງສ້າງຈຶ່ງສໍາຄັນຕໍ່ພວກເຮົາ ?

5) ສເນີໃຫ້ນັກຮຽນອ່ານ ປະຖົມມະການ 1:13 ຊຶ່ງໄດ້ເປີດເຜີຍເຖິງຄໍາເວົ້າທໍາອິດຂອງພຣະເຈົ້າທີ່ວ່າ "*ໃຫ້ມີແສງສະວ່າງເກີດຂຶ້ນ*" **ຄໍາຖາມ:** ທ່ານໄດ້ຮຽນຮູ້ສິ່ງໃດແດ່ກ່ຽວກັບພຣະເຈົ້າ ຈາກຖ້ອຍຄໍາຂອງພຣະອົງທີ່ກ່າວວ່າ *(ໃຫ້ມີແສງສະວ່າງເກີດຂຶ້ນ )* ແລະຣິດອໍານາດອັນສູງສຸດຂອງພຣະອົງ ( ແລ້ວແສງສະວ່າງກໍເກີດຂຶ້ນ) ທ່ານຄິດວ່າເປັນຫຍັງພຣະຄັມພີບອກວ່າພຣະ ເຈົ້າຊົງສ້າງ ແຕ່ບໍ່ໄດ້ບອກແນ່ນອນວ່າພຣະອົງສ້າງຢ່າງໃດ?

5. ຂຽນຂໍ້ພຣະຄັມພີຕ່າງ ໆລຸ່ມນີ້ໃສ່ໃນກະດາດ: ( ປະຖົມມະການ 1:3-5; ເພງສັຣເສີນ 18:28; 119:105,130; ໂຢຮັນ 1:4-9;8:12;12:46; 1 ເປໂຕ 2:9; 1 ໂຢຮັນ 1:5; ພຣະນິມິດ 22:5 )ໃຫ້ນັກຮຽນອ່ານແລ້ວມາສົນທະນາກັນວ່າ ພຣະເຈົ້າໄດ້ນໍາແສງສະວ່າງເຂົ້າມາໃນຊີວິດຂອງເຮົາຢ່າງໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ປະຖົມມະການ 1:1-4

1. ພຣະເຈົ້າໄດ້ຊົງສ້າງຫຍັງໃນປະຖົມມະການ 1:1 ?
2. ຂະນະທີ່ທ່ານອ່ານການນິຣະມິດສ້າງນັ້ນ ແມ່ນຫຍັງທີ່ສ້າງຄວາມປະທັບໃຈທ່ານຫລາຍກວ່າໝູ່?
3. ເມື່ອທ່ານເຫັນວ່າພຣະເຈົ້າຊົງເປັນພຣະຜູ້ສ້າງ ໄດ້ສະທ້ອນຄວາມເຂົ້າໃຈຂອງທ່ານຕໍ່ພຣະເຈົ້າຢ່າງໃດ?
4. ທ່ານໄດ້ຮັບຮູ້ການສ້າງໂລກຂອງພຣະເຈົ້າໃນຊີວິດຂອງທ່ານທຸກມື້ ຢ່າງໃດ?

## 2. <u>ລັກສະນະທັມມະຊາດ ແລະຈຸດປະສົງຂອງພຣະເຈົ້າ:</u> ( ປະຖົມມະການ 1:26-28 )

1) ຈັດນັກຮຽນເປັນກຸ່ມນ້ອຍ ໆ ແລະໃຫ້ເຂົາສັງເກດເບິ່ງຮູບຂອງ ລູກ ໆ ແລະ ຫລານ, ແລ້ວສົນທະນາກັນເຣື່ອງທັມມະຊາດລັກສະນະທ່າທາງຂອງຄົນໃນຄອບຄົວວ່າເປັນດ້ວຍເຫດໃດເຂົາຈຶ່ງຄ້າຍຄືກັນ? ລັກສະນະທ່າທາງນິສັຍໃຈຄໍກໍຄ້າຍ ໆ ກັນ ( ແຕ່ກໍຈະບໍ່ສະແດງອອກໃຫ້ເຫັນຢູ່ທຸກຍາມ) ແຕ່ມັນກໍສະທ້ອນໃຫ້ເຫັນເຖິງພໍ່ແມ່ ແລະພໍ່ເຖົ້າແມ່ເຖົ້າຂອງເຂົາໄດ້.

2) ໃຫ້ນັກຮຽນອາສາສມັກອ່ານພຣະທັມ ປະຖົມມະການ 1:26-28 **ອະທິບາຍ:** ໃນຖ້ອຍຄໍາທີ່ວ່າ *ລັກສະນະ* ແມ່ນຫມາຍເຖິງ ການຮູ້ເຫດຜົນ, ບຸຄລິກ, ຄວາມສາມາດໃນການຕັດສິນໃຈ ທີ່ເຮັດໃຫ້ມະນຸດຄ້າຍຄືກັບພຣະເຈົ້າ. ຊຶ່ງເຫມືອນກັບສະມາຊິກຄອບຄົວທີ່ມີຄຸນສົມບັດແລະບຸຄລິກທີ່ສືບຕໍ່ກັນມາ. ພຣະເຈົ້າຊົງສ້າງມະນຸດໃຫ້ມີລັກສະນະທີ່ສະທ້ອນໃຫ້ເຫັນບຸຄລິກລັກສະນະເຫມືອນກັບພຣະອົງ.

3)ແຕ້ມຮູບຄົນແບບງ່າຍໆ ໃສ່ກະດານ, ຖາມນັກຮຽນວ່າມະນຸດເຮົາໄດ້ສະທ້ອນໃຫ້ເຫັນພຣະລັກສະນະແລະພຣະປະສົງຂອງພຣະເຈົ້າແນວໃດແດ່? ຂຽນຄໍາຕອບໃສ່ຮູບນັ້ນ ຍົກຕົວຢ່າງເຊັ່ນ ຫາກຕອບວ່າ "ມີຄວາມອົດເຫມືອນພຣະເຈົ້າ" ກໍອາດຈະແຕ້ມຮູບໂມງໃສ່ທີ່ແຂນ, ຫລືຂຽນຄໍາວ່າ "ອົດທົນ" ໃສ່ໃກ້ກັບຫົວໃຈໃນຮູບນັ້ນ.

4)**ອະທິບາຍ:** ພວກເຮົາໄດ້ຮັບການໜູນໃຈທັງຕົນເອງແລະຮ່ວມກັບຄົນອື່ນນໍາວ່າມະນຸດທຸກຄົນພຣະເຈົ້າສ້າງຂຶ້ນມາພິເສດສໍາລັບພຣະອົງ. ແຕ່ຢ່າງໃດກໍຕາມ, ສິ່ງນີ້ໄດ້ເຕືອນສະຕິພວກເຮົາໃຫ້ເປັນຜູ້ທີ່ຖ່ອມຕົນແລະມີໃຈກະຕັນຍູຮູ້ພຣະຄຸນ, ບໍ່ແມ່ນເຍີ່ຍິ່ງ ຫລືອວດໂຕ.

5) **ຄໍາຖາມ:** ເມື່ອຄົນອື່ນເບິ່ງຮູບຂອງທ່ານ ແລ້ວເຂົາວ່າແນວໃດ? ຄືໃຜ ? - ທ່ານໄດ້ມີລັກສະນະຂອງໃຜໃນຊີວິດ?
- ທ່ານໄດ້ສະແດງພຣະລັກສະນະຂອງພຣະເຈົ້າແລະບຸຄລິກຂອງພຣະອົງໃນຊີວິດຂອງທ່ານແຕ່ລະວັນຢ່າງໃດ?
- ທ່ານມີຄວາມຄ້າຍຄືພຣະເຈົ້າ ດ້ວຍການສະແດງພຣະລັກສະນະ, ເຫດຜົນ, ແລະບຸຄລິກຂອງພຣະອົງຕໍ່ຄົນທີ່ຢູ່

ອ້ອມຮອບທ່ານຢ່າງໃດແດ່? - ມີສາມຢ່າງທີ່ທ່ານຈະຕ້ອງເຮັດກ່ອນສິ່ງອື່ນເພື່ອວ່າທ່ານຈະມີລັກສະນະຄ້າຍຄືພຣະເຈົ້າ ສິ່ງເຫລົ່ານັ້ນແມ່ນຫຍັງແດ່? *(ຄວາມຮັກ, ຄວາມອົດທົນ, ການໃຫ້ອະໄພ )*

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ປະຖົມມະການ 1:26-28

1. ໃນຂໍ້ພຣະຄໍາເຫລົ່ານີ້ໄດ້ເວົ້າເຖິງການຊົງສ້າງມະນຸດແລະພຣະປະສົງຂອງພຣະອົງຢ່າງໃດແດ່?
2. ການສ້າງໃຫ້ມີຮູບຮ່າງຄ້າຍຄືກັບພຣະອົງນັ້ນມີຄວາມໝາຍແນວໃດ? *(ບຸຄລິກ, ຄວາມປະສົງ, ຄວາມຕັ້ງໃຈ, ສະຕິປັນຍາ, ສິນທັມ, ຄວາມສາມາດດ້ານຈິດວິນຍານ ແລະ ອື່ນໆ )*
3. ທ່ານຮູ້ສຶກແນວໃດຕໍ່ຄວາມຈິງທີ່ວ່າທ່ານໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ?
3. ທ່ານຄວນຈະຮູ້ໄດ້ຢ່າງໃດແດ່ກ່ຽວກັບຄວາມຈິງນີ້ ວ່າຄວາມສັມພັນຂອງທ່ານມີຜົນສະທ້ອນຕໍ່ພຣະເຈົ້າແລະຕໍ່ຄົນອື່ນ ໆ ນໍາ?

## 3. <u>ອາຫານການກິນຢ່າງຫລວງຫລາຍຂອງພວກເຮົາ:</u> ປະຖົມມະການ 1:29-31

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ 1:29-31
2) ໃຫ້ຍົກເອົາຄວາມແຕກຕ່າງຂອງອາຫານຫລາຍ ໆຊະນິດທີ່ກິນໃນການກິນລ້ຽງໃນງານຄຣິສມາສແລະໃນຊ່ວງວັນພັກທີ່ຜ່ານມານີ້ **ຄໍາຖາມ:** (1) ແກ່ນໝາກໄມ້ຢູ່ໃນໝາກໄມ້ມີຄວາມສໍາຄັນຫຍັງແດ່? ( ສືບແນວ ແຜ່ຂຍາຍພັນ..) (2) ພຣະເຈົ້າໄດ້ຊົງຈັດຕຽມອາຫານຢ່າງມາກມາຍຢ່າງໃດ? (3) ສິ່ງນີ້ໄດ້ເປີດເຜີຍໃຫ້ເຫັນພຣະລັກສະນະຂອງພຣະເຈົ້າແລະຄວາມຮູ້ສຶກຕໍ່ພວກເຮົາແນວໃດແດ່?
3) **ອະທິບາຍ:** "ເມື່ອຕົ້ນເດີມພຣະເຈົ້າ" ພຣະເຈົ້າຊົງສ້າງດ້ວຍແຜນການແລະຈຸດປະສົງອັນດີ, ພຣະອົງມີແຜນການແລະຈຸດປະສົງທີ່ດີໃນຊີວິດຂອງພວກເຮົາ ເມື່ອເຮົາເລີ່ມຕົ້ນດໍາເນີນຊີວິດໃນພຣະອົງ. ໃຫ້ພວກເຮົາໃຊ້ຖ້ອຍຄໍານີ້ເພື່ອປະກາດຂ່າວປະເສີດຕໍ່ນັກຮຽນທີ່ຍັງບໍ່ເປັນຄຣິສຕຽນເທື່ອ.
4) ສົນທະນາກັນເຣື່ອງທີ່ມະນຸດໄດ້ສ້າງບັນຫາທີ່ເປັນຜົນຮ້າຍຕໍ່ສະພາບແວດລ້ອມ, ສົນທະນາກັນເຖິງບັນຫາທີ່ມະນຸດສ້າງແລະຄວາມບາບ ທີ່ໄດ້ສົ່ງຜົນເສັຽຫາຍຕໍ່ແຜ່ນດິນ, ສັດ, ແລະໂລກ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ປະຖົມມະການ 1:29-31

1. ພຣະເຈົ້າໄດ້ຊົງສໍາແດງການກະກຽມອາຫານຢ່າງຫລວງຫລາຍໃຫ້ເຫັນຢ່າງໃດແດ່ໃນຂໍ້ພຣະຄໍາເຫລົ່ານີ້?
2. ໃນຊີວິຂອງທ່ານມີທາງໃດແດ່ທີ່ທ່ານໄດ້ພົບອາຫານທີ່ພຣະເຈົ້າໄດ້ຊົງຈັດຕຽມໄວ້ໃຫ້?
3. ທ່ານຂອບຄຸນພຣະເຈົ້າສໍາລັບອາຫານຢ່າງຫລວງຫລາຍນີ້ທຸກມື້ແນວໃດ?
4. ມີທາງໃດແດ່ທີ່ທ່ານສາມາດແບ່ງປັນອາຫານແລະສິ່ງຂອງທີ່ທ່ານຫາມາໄດ້ໃຫ້ກັບຄົນອື່ນຂາດເຂີນ?

## 4. <u>ເຮົາຄວນນະມັສການພຣະເຈົ້າ:</u> ປະຖົມມະການ 2:1-3

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ປະຖົມມະການ 2:1-3
2) ຈັດນັກຮຽນເປັນສາມກຸ່ມນ້ອຍ ໃຫ້ແຕ່ລະກຸ່ມຕອບຄໍາຖາມໃສ່ເຈັ້ຽຂນາດ 3 x 5: **ກຸ່ມທີ 1** ຂຽນ: ເພາະເຫດໃດມະນຸດເຮົາຈຶ່ງຈັດມື້ນຶ່ງໃຫ້ຢຸດທໍາງານແຕ່ລະທິດ? **ກຸ່ມທີ 2** ຂຽນ: ມະນຸດພັກຜ່ອນແຕກຕ່າງກັນຢ່າງໃດແດ່? **ກຸ່ມທີ 3** ຂຽນ: ການໃຫ້ມີມື້ນຶ່ງເປັນມື້ບໍຣິສຸດມີຄວາມໝາຍຢ່າງໃດ? ແລ້ວນໍາຄົ້ນຄວ້ານໍາກັນ *(ຖ້າບໍ່ສາມາດແຍກເປັນກຸ່ມໄດ້ ກໍໃຫ້ຄຣູຖາມຄໍາຖາມ 3 ຂໍ້ນີ້ ແລ້ວຕອບນໍາກັນ )*

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**

1. ມື້ທີເຈັດມີຄວາມສໍາຄັນແນວໃດ?
2. ການພັກຜ່ອນຂອງມະນຸດມີທາງໃດແດ່ທີ່ແຕກຕ່າງກັນ?
3. ທ່ານຈະເປັນຕົວຢ່າງໃນມື້ພັກຜ່ອນໃນການນະມັສການໃຫ້ກັບຄົນອື່ນຢ່າງໃດ?

**<u>ສລູບ</u>:**

1. **ອະທິບາຍ:** ໃຫ້ເຮັດ ຄາດຂນາດ 3×5 ຍາຍໃຫ້ນັກຮຽນ ແລະໃຫ້ທຸກຄົນຂຽນ " ອະທິຖານ ສັຣເສີນພຣະເຈົ້າ ສຳລັບການຊົງສ້າງຂອງພຣະອົງ ແລະໃຫ້ເຂົາເຈົ້າເອົາໄວ້ບ່ອນທີ່ເຫັນງ່າຍ ( ປະຕູຫ້ອງນອນ..ທາງອອກ..)
2. ຂໍໃຫ້ນັກຮຽນອ່ານບົດຮຽນນີ້ຢູ່ທີ່ບ້ານອີກ.
3. ທ້າທາຍໃຫ້ນັກຮຽນໃຊ້ເວລາແຕ່ລະມື້, ຍ່າງສັງເກດເບິ່ງສິ່ງທີ່ພຣະອົງຊົງສ້າງ, ຫລືເບິ່ງອອກໄປນອກປ່ອງຢ້ຽມ ທ່ານໄດ້ເຫັນຫຍັງແດ່? ພວກເຮົາສົມຄວນທີ່ສຸດທີ່ຈະຂອບຄຸນພຣະອົງທຸກວັນສຳລັບການຊົງສ້າງຂອງພຣະອົງ.
4. ອະທິຖານເພື່ອຄົນທັງຫລາຍພ້ອມທັງຜູ້ມີອຳນາດປົກຄອງ, ຜູ້ທີ່ຢາກຮູ້ຈັກຜູ້ສ້າງ ແລະຄວາມດີຂອງພຣະອົງດ້ວຍ.
5. ອະທິຖານປິດຫ້ອງຮຽນ

ລາວຊາວເທີນບັບຕິສສັມພັນ, ແປແລະຮຽບຮຽງໂດຍ J.H.